# ບົດທີ 9

# ເຕັມໄປໂດຍພະວິນຍານບໍລິສຸດ







*ຜູ້ໃດກໍຈະຮູ້ຢູ່ວ່າ ບັນຫານີ້ບໍ່ໄດ້ຢູ່ກັບເຄື່ອງຈັກ, ບັນຫາແຕ່ນຳ້ມັນໃນປີກ່ອນຈະບໍ່ກຸ້ມເຖິງປີນີ້. ມີຄຣິດສະຕຽນຫຼາຍຄົນທີ່ມີບັນຫາຄ້າຍຄືກັນເລື່ອງພະວິນຍານບໍລິສຸດ.*

*ເຂົາເຄີຍເຕັມໄປດ້ວຍພະວິນຍານບໍລິສຸດໃນປີກ່ອນໆ ແລະເຂົາຖືວ່າການນັ້ນຈະພໍຢູ່ເຖິງທຸກວັນນີ້. ບົດຮຽນນີ້ ຈະຍົກເລື່ອງບັນຫານັ້ນ!*

**1** ທ່ານອາດຈະຮູ້ເລື່ອງວັນເພັນເຕຄໍສະເຕ ທີ່ພະວິນຍານບໍລິສຸດສະເດັດລົງມາຕາມຄຳສັນຍາຂອງພະເຈົ້າ. ພະເຢຊູ ເຫາະຂຶ້ນເມືອສະຫວັນແລ້ວ ບອກໃຫ້ພວກລູກສິດລໍຖ້າຈົນພະວິນຍານຈະມາ. ໃນກິດຈະການ 2:4 ເຫັນວ່າເຂົາ ເຕັມໄປດ້ວຍຫຍັງ? ______________________

**2** ບໍ່ແມ່ນແຕ່ພວກສາວົກເທົ່ານັ້ນທີ່ຈະເຕັມໄປດ້ວຍພະວິນຍານບໍລິສຸດ. ໃຫ້ອ່ານ ເອເຟໂຊ 5:18 ແລ້ວຂຽນຄວາມທີ ຂາດດັ່ງຕໍ່ໄປນີ້:
"ຢ່າເມົາເຫຼົ້າແວງ ຊຶ່ງພາໃຫ້ເສຍຄົນ ແຕ່ຈົ່ງເຕັມໄປດ້ວຍ __________________ ກໍດີກວ່າ."

**3** ມີສິ່ງໃດບັງຄັບຄົນທີ່ເຕັມໄປດ້ວຍເຫຼົ້າ? (ເລືອກ)

ກ. ________ ປັນຍາ ຂ. ________ ພະວິນຍານ

ຄ. ________ ເຫຼົ້າ ງ. ________ ພະທຳ

**4** ສິ່ງໃດບັງຄັບຄົນທີ່ເຕັມໄປດ້ວຍພະວິນຍານ? (ເລືອກ ຂໍ້ດຽວ)

ກ. ________ ປັນຍາ

ຂ. ________ ພະວິນຍານ

ຄ. ________ ເຫຼົ້າ

ງ. ________ ພະທຳ



*ທີ່ຈະເຕັມໄປດ້ວຍພະວິນຍານ ມີຄວາມໝາຍຮ່ວມຢູ່ນຳດັ່ງຕໍ່ໄປນີ້:*

** ໃຫ້ພະວິນຍານຄຸ້ມຄອງ*

** ໃຫ້ຢູ່ໃຕ້ອິດທິພົນຂອງພະວິນຍານ*

** ໃຫ້ພະວິຍານຊົງນຳ*

** ໃຫ້ພະວິນຍານເຂົ້າຢູ່ກັບທ່ານ*

**5** ໃນພາສາເດີມຂອງພະຄຳພີ ຄຳທີ່ແປວ່າ “ຈົ່ງເຕັມໄປ” ນັ້ນມີເນື້ອຄວາມວ່າ “ຈົ່ງເຕັມໄປຢູ່ສະເໝີ”. ຄືສິ່ງທີ່ມີວັນເວ ລາເລີ້ມຕົ້ນ ແລະຍັງມີຢູ່ເລີຍຕໍ່ໄປ. ໃນພາສາລາວຄຳອະທິບາຍໃດຖືກກວ່າ? (ເລືອກ)

ກ. ເປັນປະສົບປະການເທື່ອດຽວແລ້ວກໍແລ້ວ

ຂ. ຈົ່ງເຕັມໄປດ້ວຍພະວິນຍານຢູ່ສະເໝີ

ຄ. ຮັບແລ້ວເລີກ

**6** ຕາມໃນ ເອເຟໂຊ 5:18 ເຮົາຄວນເຕັມໄປດ້ວຍ ______________ ຢູ່ສະເໝີ. (ຕື່ມຄວາມ)

**7** ໃນຂໍ້ພະຄຳພີຕໍ່ໄປນີ້ເຫັນພວກສາວົກເຕັມໄປດ້ວຍພະວິນຍານ.

ກ. ໃນ ກຈກ 2:1-4 ເບິ່ງຄື ເປໂຕເຕັມໄປດ້ວຍພະວິນຍານບໍ່? ____________________

ຂ. ໃນ ກຈກ 4:8 ເຫັນວ່າເປໂຕ ເຕັມໄປດ້ວຍພະວິນຍານບໍ່? ______________________

ຄ. ໃນ ກຈກ 4:31 ເປໂຕຢູ່ຮ່ວມກັບພວກເຂົາເຕັມໄປດ້ວຍພະວິນຍານບໍ່?_____________

**8** ໃນ 3 ຂໍ້ນັ້ນ (ກຈກ 2:1-4 ກຈກ 4:8 ແລະ ກຈກ 4:31) ຂໍ້ໃດແດ່ທີ່ກ່າວເລື່ອງຜູ້ອື່ນທີ່ເຕັມໄປດ້ວຍພະວິນຍານ? ____________________________________________________

**9** ເຊັ່ນດຽວກັນກັບອາຈານໂປໂລ. ຂໍ້ພະຄຳພີໃດຕໍ່ໄປນີ້ກ່າວເລື່ອງທີ່ໂປໂລ (ໃສ່ຊື່ວ່າ ໂຊໂລກໍໄດ້) ເຕັມໄປດ້ວຍ ພະວິນ ຍານ?

_______ ກຈກ 9:17 _______ ກຈກ 13:9

_______ ກຈກ 13:45 _______ ກຈກ 13:50-52

**10** ເຫັນວ່າທັງເປໂຕແລະໂປໂລກໍເຕັມໄປດ້ວຍ ______________ ຢູ່ສະເໝີ. (ຕື່ມຄວາມຂາດ)

**11** ເອເຟໂຊ ບົດຂໍ້ໃດທີ່ສອນໃຫ້ເຮົາເຕັມໄປດ້ວຍພະວິນຍານບໍລິສຸດຢູ່ສະເໝີ? ___________

**12** ໃນພະທຳກິດຈະການ ເຫັນວ່າຫຼາຍເທື່ອທີ່ພວກສາວົກເຕັມໄປດ້ວຍພະວິນຍານ ແລະໃນພະທຳເອເຟໂຊ 5:18 ເຫັນ ຄຳ “ຊົງໃຫ້ເຕັມໄປດ້ວຍພະວິນຍານຢູ່ສະເໝີ.” ວ່າຢ່າງ ໃດຈິ່ງເປັນການອັນຕະລາຍ? (ເລືອກ)

ກ. ຢ້ານວ່າຄຼິດສະຕຽນຈະຢາກເຕັມໄປໂດຍພະວິນຍານ.

ຂ. ຢ້ານວ່າເຂົາເຄີຍປະສົບປະການກັບພະວິນຍານມາໃນອາດີດ ແລ້ວເຂົາຈະບໍ່ສະແຫວງຫາພະວິນຍານຕໍ່ໄປ.

ຄ. ຢ້ານວ່າເຂົາຈະຊອກຫາພະວິນຍານຫຼາຍເກີນໄປ.

**13** ຄຣິດສະຕຽນຈິ່ງຕັ້ງໃຈຢ່າງໃດ? (ຕື່ມຄວາມທີ່ຂາດ)

ກ. ຈິ່ງເຕັມໄປດ້ວຍ ________________________ ຢູ່ ______________________

ຂ. ຢ້ານແຕ່ເຮົາຈະພໍໃຈໃນປະສົບປະການກັບ ____________ ໃນຄາວກ່ອນ ________

**14** ໃຫ້ທ່ານອ່ານຄຳດັ່ງຕໍ່ໄປນີ້ ແລ້ວຂີດຂ້າອອກຄຳໃດທີ່ບໍ່ເຂົ້າໃຈເລື່ອງປະສົບປະການກັບພະວິນຍານ.

ກ. "ຂ້ອຍປະສົບກັບພະວິນຍານໄດ້ 10 ປີກ່ອນ ຈະບໍ່ເບື່ອກ່າວເລື່ອງຈັກເທື່ອ."

ຂ. "ຂ້ອຍຂໍຈາກພະເຈົ້າໃຫ້ເຕັມໄປດ້ວຍພະວິນຍານຢູ່ທຸກມື້."

ຄ. "ຈິ່ງບອກແຕ່ຄົນທີ່ເຊື່ອໃໝ່ວ່າ ເຂົາໄດ້ຮັບພະວິນຍານໃນຄາວດຽວທີ່ໄວ້ວາງໃຈກັບພະເຢຊູແລ້ວສຸດເລື່ອງ."

ງ. "ຖ້າຂ້ອຍປະສົບກັບພະວິນຍານເໝືອນຢ່າງອາຈານຄົນນັ້ນ ກໍຈະພໍໃຈຈົນເຖິງສິ້ນຊີວິດ."

**15** ໃຫ້ອ່ານ ເອເຟໂຊ 5:18 ອີກ

ກ. ຂໍ້ນັ້ນຫ້າມບໍ່ໃຫ້ເຮັດຫຍັງ? ________________________________________

ຂ. ຈິ່ງເຮັດຫຍັງ? ________________________________________________

*ຄືຖ້າເຮົາເຕັມໄປດ້ວຍພະວິນຍານ ເຮົາຈະບໍ່ຕ້ອງການເມົາເຫຼົ້າ.*

**16** ໃຫ້ອ່ານ ລູກາ 11:13 ຖ້າລູກຄົນໃດຈະຂໍສິ່ງທີ່ດີຈາກພໍ່ ພໍ່ນັ້ນຈະຫາໃຫ້ບໍ່? ________________________



**17** ຖ້າພໍ່ທີ່ເປັນຄົນບາບ ຈະເອົາຂອງດີໃຫ້ລູກທີ່ຂໍ ເຊັ່ນດຽວກັນພະບິດາຂອງເຮົາໃນສະຫວັນ ຈະໃຫ້ສິ່ງດີບໍ່? ________ ________________________________________

**18** ໃນລູກາ 11:13 ພະບິດານັ້ນຈະປະທານຫຍັງແກ່ເຮົາທີ່ຂໍ? ______________________

| ໃຫ້ຂຽນຄຳວ່າ "ພະວິນຍານ" ໃສ່ຂອບເຈ້ຍຂ້າງ ລູກາ 11:13 ນັ້ນ. |
|---|

**19** ເມື່ອເຮົາໄວ້ວາງໃຈໃນພະເຢຊູ ເຮົາຖິ້ມໃຈເກົ່າເອົາໃຈໃໝ່ແລະຕ້ອນຮັບພະເຢຊູເປັນພະຜູ້ຊ່ວຍ. ຈິ່ງສາລະພາບ ບາບ ແລ້ວຖ້າເຮົາຈະເຮັດຕາມຄຳສັ່ງໃນເອເຟໂຊ 5:18 ເຮົາຈະຂໍຫຍັງ? ____________________________________________________________

**20** ຕາມໃນ ລູກາ 11:13 ເຮົາຕ້ອງເຮັດຫຍັງຈິ່ງຈະເຕັມໄປດ້ວຍພະວິນຍານ? ___________

**21** ໃນພາສາເດີມຂອງພະຄຳພີ ຄຳກິລິຍາວ່າ "ຈິ່ງເຕັມ" ມີເນື້ອຄວາມວ່າ "ຈິ່ງເຕັມ ຢູ່ສະເໝີ". ເຊັ່ນດຽວກັນໃນລູກາ 11:13 ຄຳກິຍາວ່າ "ຈິ່ງຂໍ" ມີເນື້ອຄວາມວ່າຈິ່ງ _____ ຢູ່ສະເໝີ. (ຕື່ມ)

**22** ໃນລູກາ 11:13 ຄຣິດສະຕຽນຕ້ອງເຮັດຢ່າງໃດຈິ່ງຈະເຕັມໄປດ້ວຍພະວິນຍານ? _________

**23** ຂໍ້ໃດໃນພະຄຳພີ ສັ່ງໃຫ້ເຮົາຂໍຈາກພະເຈົ້າຈຶ່ງຈະເຕັມໄປດ້ວຍພະວິນຍານບໍລິສຸດ? _______

**24** ໃຫ້ອ່ານ ໂຢຮັນ 7:37-39 ໃນຂໍ້ 37 ພະເຢຊູຮ້ອງຂຶ້ນຢ່າງໃດ? (ຕື່ມຄວາມຂາດ) "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງ ____________________________ ເຮົາແລະ ________________________ ".

**25** ເຫັນວ່າພະເຈົ້າພ້ອມທີ່ຈະໃຫ້ພະວິນຍານບໍລິສຸດແກ່ຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ແລະຂໍຈາກພະອົງ.

ກ. ໃນໂຢຮັນ 7:38 ເຫັນວ່າຜູ້ໃດທີ່ດື່ມຈາກນ້ຳຝ່າຍວິນຍານຈະມີຫຍັງໄຫຼອອກພາຍໃນຜູ້ນັ້ນ?

_________________________________________________________________

ຂ. ໃນຂໍ້ 39 ສິ່ງທີ່ພະອົງຊົງກ່າວນັ້ນໝາຍເຖິງຫຍັງ? ____________________________

ຄ. ທີ່ຈະໃຊ້ນ້ຳເປັນສັນຍາລັກຂອງພະວິນຍານ ປຽບທຽບຄົນທີ່ _______ ດ້ານ _________ .

**26** ຖ້າຈະຂໍຈາກພະເຈົ້າໃຫ້ເຕັມໄປດ້ວຍພະວິນຍານ ຈົ່ງຖິ້ມຫຍັງກ່ອນ? ________________

| ໃຫ້ຂຽນຄຳວ່າ "ພະວິນຍານ" ໃນພະຄຳພີ ຂ້າງໂຢຮັນ 7:37-39 |
|---|

**27** ໂຢຮັນ 7:37-39 ສັນຍາວ່າ:

ຄົນທີ່ຫິວ ຄົນທີ່ມາຫາພະອົງ ຄົນທີ່ດື່ມ ຄົນທີ່ວາງໃຈໃນພະອົງ

ຄົນນັ້ນຈະເຕັມໄປດ້ວຍຫຍັງ?

**28** ພວກຜູ້ລາຍງານຂຽນເລື່ອງໃນພະຄຳພີ ຂຽນແຕ່ພາສາກະລີກ ແລະກິລິຍາເຫຼົ່ານັ້ນໃນພາສາກະລີກມີຄວາມເຂົ້າໃຈວ່າ

ຄົນທີ່ _________________________ ຢູ່ສະເໝີ (ຕື່ມຄວາມຂາດ)

ຄົນທີ່ _________________________ ຢູ່ສະເໝີ

ຄົນທີ່ _________________________ ຢູ່ສະເໝີ

ຄົນທີ່ _________________________ ຢູ່ສະເໝີ

ຄົນເຫຼົ່ານັ້ນຈະເຕັມໄປດ້ວຍ __________________________________ ຢູ່ສະເໝີ.

**29** ກ. ເປົ້າໝາຍປາຍທາງຝ່າຍພະວິນຍານບໍລິສຸດໃນຊີວິດຄຣິດສະຕຽນເຮົາຄືຫຍັງ?

_________________________________________________________________

ຂ. ຄົນທີ່ເຄີຍປະສົບປະການຢ່າງເຕັມໄປດ້ວຍພະວິນຍານໃນອາດີດ ຍັງຈົ່ງສະແຫວງຫາພະວິນຍານຢູ່ສະ ເໝີ. ເຖິງວ່າເຮົາເຄີຍເຕັມໄປດ້ວຍ ________________ ໃນອາດີດກໍຕາມ ແຕ່ຍັງຈົ່ງຂໍຢູ່ສະເໝີ. (ຕື່ມຄວາມຂາດ)

**30** ຜົນຂອງພະວິນຍານບໍລິສຸດໃນຊີວິດເຮົາມີຢູ່ຫຼາຍຢ່າງ ຕ່າງຄົນຕ່າງມີຄວາມເຂົ້າໃຈໄປຄົນລະຢ່າງໃນເລື່ອງນີ້. ໃຫ້ ທ່ານອ່ານຂໍ້ພະຄຳພີຂ້າງຂວານີ້ແລ້ວຈັບຄູ່ກັບຜົນຮັບຂອງພະວິນຍານຂ້າງຊ້າຍ.

ກ. _____________ ສັນລະເສີນແລະຂອບພະຄຸນພະເຈົ້າ ກຈກ 2:4
ຂ. _____________ ຍອມຟັງເຊິ່ງກັນແລະກັນ ກຈກ 4:31
ຄ. _____________ ປາກພາສາຕ່າງ ໆ ກຈກ 11:24
ງ. _____________ ກ່າວພະທຳຂອງພະເຈົ້າດ້ວຍໃຈກ້າຫານ ກຈກ 13:52
ຈ. _____________ ເຕັມໄປດ້ວຍຄວາມເຊື່ອ ອຟຊ 5:18-20
ສ. _____________ ເຕັມໄປດ້ວຍຄວາມຊົມຊື່ນຍິນດີ ອຟຊ 5:21

**31** ຜົນຂອງພະວິນຍານຍັງມີຫຼາຍກວ່ານັ້ນອີກ. ໃຫ້ອ່ານຄາລາເຕຍ 5:22-23 ໃຫ້ທ່ານນັບເບິ່ງວ່າອາຈານໂປໂລກ່າວ ເລື່ອງຜົນຂອງພະວິນຍານຈັກຢ່າງໃນ 2 ຂໍ້ນັ້ນ? ________________

**32** ໃນບົດຮຽນທີ 7 ເຮົາຮຽນມາແລ້ວເລື່ອງລາຊະກິດຂອງພະວິນຍານໃນການສ້າງຄວາມສຳພັນລະຫວ່າງເຮົາກັບ ພະເຈົ້າ ໃນສອງດ້ານໃດ?

ກ. ______________________________________________________________

ຂ. ______________________________________________________________

ພະວິນຍານດັດແປງອຸປະນິໄສຂອງຄຣິດສະຕຽນໃຫ້ໃໝ່ໃນສອງດ້ານໃດ?

ຄ. ______________________________________________________________

ງ. ______________________________________________________________

**33** ເຮົາຍິ່ງເຕັມໄປດ້ວຍພະວິນຍານບໍລິສຸດ ຜົນຂອງພະວິນຍານຍິ່ງຈະປາກົດມາໃນຊີວິດຂອງເຮົາ. ແຕ່ຈົ່ງລະວັງຕົວບໍ່ ວັດ ຜົນໃນຊີວິດຂອງຕົນເອງແລະຢ່າຊູ່ປຽບຜົນຂອງພະວິນຍານໃນຊີວິດຂອງທ່ານກັບຜົນໃນຊີວິດຂອງຜູ້ອື່ນມີແຕ່ຕັ້ງໃຈ ຕາມເປົ້າໝາຍວ່າຈະເຕັມໄປດ້ວຍພະວິນຍານຢູ່ສະເໝີ.

ກ. ໃຫ້ອ່ານ ເອເຟໂຊ 4:30 ຂໍ້ນັ້ນວ່າ ຢ່າໃຫ້ພະວິນຍານຂອງພະເຈົ້າເສຍຫຍັງ? _________

ຂ. ເພາະໂດຍພະວິນຍານນັ້ນ ເຮົາໄດ້ຖືກຫຍັງໄວ້? ____________________________

**34** ໃນບົດທີ 7 ເຮົາຮຽນຮູ້ແລ້ວວ່າ ພະວິນຍານປະທັບເຮົາໄວ້ຈົນວັນໄດ້ພົ້ນຕາມສັນຍາລັກໃດ?

______________________________________________________________

**35** ເທື່ອໃດທີ່ຄຣິດສະຕຽນເຮົາເຮັດໃຫ້ພະວິນຍານບໍລິສຸດເສຍພະໄທຈະເປັນຢ່າງໃດຕໍ່ໄປ? (ເລືອກ ປະການດຽວ)

ກ. _______ ພະວິນຍານຈະໜີປະເຮົາໄວ້
ຂ. _______ ພະວິນຍານຈະຕີສອນເຮົາ
ຄ. _______ ລາຊະກິດຂອງພະວິນຍານໃນເຮົາຈະລົດລົງ

**36** ໃຫ້ອ່ານ ເອເຟໂຊ 4:26-31 ໃນແຕ່ລະຂໍ້ຕໍ່ໄປນີ້ມີສິ່ງໃດທີ່ຈະໃຫ້ພະວິນຍານເສຍພະໄທ? (ເລືອກ)

ກ. _______ ຮ້າຍໃສ່ຜູ້ອື່ນ

ຂ. _______ ຍົກໂທດໃຫ້ເຂົາ

ຄ. _______ ລັກຂອງ

ງ. _______ ຂໍໃຫ້ເຕັມໄປດ້ວຍພະວິນຍານ

ຈ. _______ ປາກຄຳຫຍາບຊ້າ

**37** ໃຫ້ທ່ານໝາຍ √ ໃສ່ຂໍ້ທີ່ຮູ້ເສຍໃຈໄດ້. (ເລືອກ)

______ ໄຟຟ້າ ______ ເຫຼັກກ້າ ______ ພະວິນຍານ

**38** ມີຄຳເຕືອນຄ້າຍຄືກັນໃນ 1 ເທຊະໂລນິກ 5:19
ຂໍ້ນັ້ນວ່າ: "ຢ່າທັກ ________________ ພະວິນຍານ" (ຕື່ມຄວາມ ຂາດ)

**39** ພະຄຳພີບໍ່ໃຫ້ເຮົາເຮັດຢ່າງໃດຕໍ່ພະວິນຍານ? (ຕື່ມຄວາມທີ່ຂາດ)

ກ. ຢ່າເຮັດພະວິນຍານບໍລິສຸດຂອງພະເຈົ້າ __________________________ .

ຂ. ຢ່າທັກ _____________ ພະວິນຍານ.

**40** ໃຫ້ອ່ານ 1 ໂກລິນໂທ 3:16 ພະວິນຍານຂອງພະເຈົ້າສະຖິດຢູ່ໃສ? (ເລືອກ)



ກ. _______ ໃນທຸກຄົນ

ຂ. _______ ໃນຄົນທີ່ໄວ້ວາງໃຈໃນພະເຢຊູ

ຄ. _______ ໃນຕຶກແລະອາຄານ

**41** ດັ່ງນັ້ນ ອາຈານໂປໂລກ່າວວ່າ "ພວກເຈົ້າເປັນ __________ ຂອງພະເຈົ້າ."(ຕື່ມຄວາມຂາດ)

**42** ໃນສະໄໝພະຄຳພີເດີມ ຊາດຢິວມີພະວິຫານ ແລະຂ້າງໃນພະວິຫານມີຫ້ອງໜຶ່ງທີ່ເປັນຫ້ອງສັກສິດທີ່ສຸດ ຊຶ່ງເປັນ ທີ່ສະຖິດຂອງພະເຈົ້າ. ໃນທຸກວັນນີ້ ພະເຈົ້າສະຖິດຢູ່ກັບໃຜ? _______

_________________________________________________________________

**43** ໃຫ້ທ່ານຂີດຂ້າອອກຄວາມດັ່ງຕໍ່ໄປນີ້ທີ່ບໍ່ເຂົ້າໃຈດີວ່າ ພະເຈົ້າສະຖິດຢູ່ກັບຊີວິດສະຕຽນເຮົາ. (ຂີດຂ້າອອກຂໍ້ທີ່ບໍ່ຖືກ)



ກ. ຖ້າເຮົາຊອກຫາຕຶກດີໆ ໄດ້ເຮົາຈະຖະຫວາຍໃຫ້ ເປັນສະຖານທີ່ສັກສິດຂອງພະເຈົ້າ.

ຂ. ເທື່ອໃດທີ່ອ້ອນວອນໃນວິຫານ ຄືເປັນຜົນປະໂຫຍດຫຼາຍກວ່າການອ້ອນວອນຢູ່ໃນເຮືອນ.

ຄ. ຖ້າມີສອງຫຼືສາມຄົນປະຊຸມກັນໃນນາມຂອງ ພະເຢຊູ ພະອົງຢູ່ຖ້າມກາງເຂົາ.

ງ. ການລັກຂອງຈາກວິຫານຄວນມີໂທດໜັກກວ່າການລັກຂອງ ຈາກເຮືອນບຸກຄົນ ເພາະວິຫານເປັນສະຖານ ທີ່ສັກສິດ.

**44** ສ່ວນຫ້ອງປະຊຸມທີ່ເຮົາໃຊ້ນະມັດສະການພະເຈົ້າ ອາດຈະເອີ້ນວ່າ "ວິຫານ" ຫຼື "ໂບດສະຕະຈັກ" ກໍໄດ້ ແຕ່ພະເຈົ້າ ບໍ່ໄດ້ ສະຖິດຢູ່ບ່ອນດຽວນັ້ນ. ພະຄຳພີໃໝ່ສອນວ່າພະເຈົ້າຢູ່ໃນໃຜ?

________________________________________

**45** ໃຫ້ອ່ານໂຢຮັນ 14:17

ກ. ພວກໃດບໍ່ຮັບຮູ້ພະວິນຍານ? ________________________

ຂ. ພະວິນຍານສະຖິດຢູ່ກັບພວກໃດ? ________________________

**46** ພະວິນຍານບໍລິສຸດປະທັບຢູ່ໃສ? ________________________

**47** ກ່ຽວກັບພະວິນຍານບໍລິສຸດ ໂບດສະຕຽນມີເປົ້າໝາຍຢ່າງໃດ? ______________

**48** ພະຄຳພີເຕືອນບໍ່ໃຫ້ເຮັດຫຍັງຕໍ່ພະວິນຍານ?

ກ. ______________________________________

ຂ. ______________________________________

**49** ພະວິນຍານຂອງພະເຈົ້າສະຖິດຢູ່ກັບໃຜ?________________________

## ຄຳຕອບ:

***1*** *ພະວິນຍານບໍລິສຸດ*

***2*** *ພະວິນຍານ*

***3*** *ຄ ຖືກ*

***4*** *ຂ ຖືກ*

***5*** *ຂ ຖືກ*

***6*** *ພະວິນຍານ*

***7*** *ກ. ເຕັມ ຂ. ເຕັມ ຄ. ເຕັມ*

***8*** *ກຈກ 2:1-4 ແລະ ກຈກ 4:31*

***9*** *ກຈກ 9:17 ກຈກ 13:9 ແລະ ກຈກ 13:50-52*

***10*** *ພະວິນຍານ*

***11*** *ອຟຊ 5:18*

***12*** *ຂ ຖືກ*

***13*** *ກ. ພະວິນຍານ... ສະເໝີ ຂ. ພະວິນຍານ... ຈຶ່ງຈະບໍ່ຂໍຕໍ່ໄປ*

***14*** *(ຂ້າອອກ ກ. ຄ. ແລະ ງ.)*

***15*** *ກ. ຢ່າເມົາເຫຼົ້າແວງ ຂ. ຈົ່ງເຕັມໄປດ້ວຍພະວິນຍານ*

***16*** *ຫາໃຫ້*

***17*** *ໃຫ້*

**ຄຳຕອບ (ຕໍ່):**

**18** *ປະທານພະວິນຍານ*

**19** *ໃຫ້ເຕັມໄປດ້ວຍພະວິນຍານ*

**20** *ຂໍ*

**21** *ຂໍ*

**22** *ຂໍ (ຢູ່ສະເໝີ)*

**23** *ລູກາ 11:13*

**24** *ມາຫາ... ດື່ມ*

**25** *ກ. ແມ່ນ້ຳອັນມີຊີວິດ ຂ. ພະວິນຍານ ຄ. ຫິວ... ວິນຍານ*

**26** *ຖິ້ມໃຈເກົ່າເອົາໃຈໃໝ່*

**27** *ພະວິນຍານ*

**28** *ຫິວ ມາຫາພະອົງ ດື່ມ ວາງໃຈໃນພະອົງ ພະວິນຍານບໍລິສຸດ*

**29** *ກ. ໃຫ້ເຮົາເຕັມໄປດ້ວຍພະວິນຍານ ຂ. ພະວິນຍານ*

**30** *ກ. ອຟຊ 5:18-20 ຂ. ອຟຊ 5:21 ຄ. ກຈກ 2:4 ງ. ກຈກ 4:31*
*ຈ. ກຈກ 11:24 ສ. ກຈກ 13:52*

**31** *9 ຢ່າງ*

**32** *ກ. ໃຫ້ເຮົາໝັ້ນໃຈໃນຄວາມລອດພົ້ນ*
*ຂ. ໃຫ້ຄຳອ້ອນວອນຂອງເຮົາຖືກຕາມນ້ຳພະໄທ*
*ຄ. ຊ່ວຍທຳລາຍ ການຂອງຝ່າຍເນື້ອກາຍ*
*ງ. ໃຫ້ມີຜົນຂອງພະວິນຍານ*

**33** *ກ. ເສຍພະໄທ ຂ. ປະທັບຕາໝາຍໄວ້*

**34** *ການປະທັບຕາ*

**35** *ຄ ຖືກ*

**36** *ກ ຄ ຈ ຖືກ*

**37** *ພະວິນຍານ*

**38** *ຫ້າມ*

**39** *ກ. ເສຍພະໄທ ຂ. ຫ້າມ*

**40** *ຂ ຖືກ*

**41** *ວິຫານ*

**42** *ຢູ່ກັບເຮົາ (ທີ່ໄວ້ວາງໃຈໃນພະເຢຊູ)*

**43** *ຂີດຂ້າອອກ ກ ຂ ແລະ ງ*

**44** *ຢູ່ກັບຄົນທີ່ໄວ້ວາງໃຈໃນພະອົງ*

**45** *ກ. ໂລກ ຂ. ຜູ້ທີ່ໄວ້ວາງໃຈໃນພະອົງ*

**ຄໍາຕອບ (ຕໍ່):**

**46** *ຢູ່ກັບຜູ້ທີ່ໄວ້ວາງໃຈກັບພະອົງ*

**47** *ໃຫ້ເຕັມໄປດ້ວຍພະວິນຍານ*

**48** *ກ. ຢ່າເຮັດໃຫ້ເສຍພະໄທ* *ຂ. ຢ່າຫັກຫ້າມພະວິນຍານ*

**49** *ຢູ່ກັບຄົນທີ່ໄວ້ວາງໃຈກັບພະອົງ*